ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ວິທະຍາໄລຊົນລະປະທານ ທ່າງ່ອນ

ເລກທີ..0650.../ວຊປທ.

ນະຄອນຫຼວງວຽງຈັນ, ວັນທີ..02. 07. 2026

## ໜັງສືແຈ້ງເຊີນປະມູນ

1. ວິທະຍາໄລຊົນລະປະທານ ທ່າງ່ອນ ຂໍເຊີນບັນດາບໍລິສັດ, ຮ້ານ ທີ່ສົນໃຈ ແລະ ມີຄຸນວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະໜອງ ອຸປະກອນເຄື່ອງເຟີນີເຈີ ປະກອບດ້ວຍ: 1) ໂຕະ ຈຳນວນ 80 ຊຸດ, 2) ຕັ່ງ ຈຳນວນ 160 ຊຸດ. ໄລຍະການຈັດສົ່ງແມ່ນ 30 ວັນ ພາຍຫຼັງທີ່ໄດ້ເຊັນສັນຍາ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆບໍລິສັດ, ຮ້ານ ຂອງນິຕິບຸກຄົນພາຍໃນ ທີ່ດຳເນີນທຸລະກິດຢູ່ໃນ ສປປ ລາວ, ມີໃບທະບຽນວິສາຫະກິດ, ມີເລກປະຈຳຕົວເສຍອາກອນ ແລະ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ຖືກຕ້ອງຕາມກົດໝາຍ;
4. ບໍລິສັດ, ຮ້ານ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ວິທະຍາໄລຊົນລະປະທານ ທ່າງ່ອນ (ຕິດຕໍ່ທາງໂທລະສັບ 020 22 426 944; 020 98411169) ໃນໂມງລັດຖະການ 8:00-12:00 ແລະ 13:30-16:00 ໂມງ. ວິທະຍາໄລຊົນລະປະທານ ທ່າງ່ອນ ມີສຳນັກງານຕັ້ງຢູ່ບ້ານ ພູຄຳ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ;
5. ເອກະສານຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈ ສາມາດຍື່ນໜັງສືສະເໜີຫາ ວິທະຍາໄລຊົນລະປະທານ ທ່າງ່ອນ, **ນັບແຕ່ວັນທີ 02 ກໍລະກົດ 2026 ຫາ 07 ສິງຫາ 2026** ໃນລາຄາຊອງປະມູນ ຊອງລະ **800,000** ກີບ (ແປດແສນກີບຖ້ວນ) ເງິນຈຳນວນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນ ຕ້ອງສົ່ງທີ່ວິທະຍາໄລຊົນລະປະທານ ທ່າງ່ອນ , ບ້ານ ພູຄຳ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ ໃນເວລາ ຫຼື ກ່ອນເວລາ **14:00 ໂມງ ຂອງວັນທີ 07 ສິງຫາ 2026**. ຊອງປະມູນທີ່ສົ່ງທາງເອເລັກໂທນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດໃນເວລາ **14:00 ໂມງ ຂອງວັນທີ 07 ສິງຫາ 2026** ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນ ການປະມູນດ້ວຍກງດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ **2%** (ສອງສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ເຂົ້າຮ່ວມການປະມູນ ໃນຄັ້ງນີ້ດ້ວຍ.

ຮັກສາການອຳນວຍການ

K. Somsanong

ປທ. ແກ້ວສົມພົງ ເທບພະຮັກວົງໄຊ